*ບົດຂ່າວຈາກ ຄມສ*

# ລັດຖະມົນຕີວ່າການ ກະຊວງພະລັງງານ ແລະ ບໍ່ແຮ່ ມຸ່ງຫວັງທີ່ຈະສົ່ງເສີມ ສາຍພົວພັນກັບ ຄມສ

**ທີ່ນະຄອນຫຼວງວຽງຈັນ, ສປປ ລາວ, ວັນທີ 8 ກໍລະກົດ 2021** — ລັດຖະມົນຕີວ່າການ ກະຊວງພະລັງງານ ແລະ ບໍ່ແຮ່ ຂອງ ສປປ ລາວ ມຸ່ງຫວັງ ທີ່ຈະສະໜັບສະໜູນ ແລະ ສົ່ງເສີມ ສາຍພົວພັນກັບ ຄະນະກຳມາທິການແມ່ນ້ຳຂອງສາກົນ ເນື່ອງຈາກວ່າ ຄມສ ກຳລັງເລັ່ງລັດ ສ້າງຍຸດທະສາດ ແລະ ຄຳແນະນຳສຳຄັນຕ່າງໆ ໃຫ້ສຳເລັດ ໃນປີນີ້ ເພື່ອຊີ້ນຳ ການພັດທະນາຢ່າງມີຄວາມຮັບຜິດຊອບ ໃນພາກພື້ນແມ່ນ້ຳຂອງ.

ພະນະທ່ານ ດຣ. ດາວວົງ ພອນແກ້ວ ທີ່ຖືກແຕ່ງຕັ້ງໃຫ້ເປັນລັດຖະມົນຕີວ່າການ ກະຊວງພະລັງງານ ແລະ ບໍ່ແຮ່ ຂອງ ສປປ ລາວ ໃນເດືອນມີນາ ປີນີ້ ໄດ້ກ່າວບອກ ຫົວໜ້າກອງເລຂາຂອງ ຄມສ ກໍ່ຄື ທ່ານ ດຣ. ອັນ ພິສ ຣັດດາ ໃນລະຫວ່າງກອງປະຊຸມ ໃນຫວ່າງບໍ່ດົນມານີ້ ວ່າ: ກະຊວງດັ່ງກ່າວ ມຸ່ງໝັ້ນທີ່ຈະເຮັດວຽກ ຄຽງບ່າຄຽງໄຫຼ່ກັບ ບັນດາປະເທດສະມາຊິກອື່ນໆ ຂອງ ຄມສ.

"ພວກເຮົາມຸ່ງຫວັງ ທີ່ຈະເພີ່ມທະວີການຮ່ວມມື ກັບ ຄມສ ແລະ ໃຫ້ການຊ່ວຍເຫຼືອທີ່ຈຳເປັນ ຕໍ່ກັບວຽກງານ ທີ່ ຄມສ ກຳລັງປະຕິບັດໃນພາກພື້ນນີ້" ກ່າວໂດຍທ່ານ ດຣ. ດາວວົງ.

ໃນເວລາສະແດງຄວາມຍິນດີ ກັບການຮັບຕຳແໜ່ງໃໝ່ ຂອງທ່ານ ດຣ. ດາວວົງ ນັ້ນ, ທ່ານ ດຣ. ຣັດດາ ໄດ້ຂໍໃຫ້ທ່ານລັດຖະມົນຕີ ເບິ່ງເອກະສານ 3 ສະບັບ ທີ່ ຄມສ ໄດ້ສົ່ງໃຫ້ ສປປ ລາວ ເພື່ອຂໍອະນຸມັດ ຫຼັງຈາກທີ່ໄດ້ຮັບການອະນຸມັດ ແລະ ເຫັນດີແລ້ວຈາກ ປະເທດສະມາຊິກອື່ນໆ ກໍ່ຄື ປະເທດກຳປູເຈຍ, ປະເທດໄທ ແລະ ປະເທດຫວຽດນາມ.

ຫົວໜ້າກອງເລຂາ ຄມສ ໄດ້ກ່າວວ່າ ຮ່າງຍຸດທະສາດພະລັງງານໄຟຟ້າຍືນຍົງ, ຄຳແນະນຳກ່ຽວກັບການອອກແບບເບື້ອງຕົ້ນ ສຳລັບ ເຂື່ອນຕາມລຳນ້ຳຂອງ ສະບັບປີ 2020 ແລະ ຄຳແນະນຳສຳລັບ ການປະເມີນຜົນກະທົບດ້ານສິ່ງແວດລ້ອມຂ້າມຊາຍແດນ ສຳລັບ ອ່າງແມ່ນ້ຳຂອງຕອນລຸ່ມນັ້ນ ໄດ້ສ້າງຂຶ້ນມາຈາກ ການດຳເນີນວຽກງານຫຼາຍປີ ແລະ ຈາກການປຶກສາຫາລືຢ່າງກວ້າງຂວາງກັບ 4 ປະເທດສະມາຊິກຂອງ ຄມສ ແລະ ພາກສ່ວນກ່ຽວຂ້ອງຕ່າງໆ.

ທ່ານຍັງໄດ້ກ່າວເພີ່ມຕື່ມອີກວ່າ ກອງເລຂາ ຄມສ ໄດ້ຮ່ວມວຽກງານຢ່າງໃກ້ສິດກັບ ບັນດາພະນັກງານຂອງ ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກອງເລຂາ ຄະນະກຳມະການແມ່ນ້ຳຂອງແຫ່ງຊາດລາວ ເພື່ອຮັບປະກັນວ່າ ປະເດັນສຳຄັນຕ່າງໆ ທີ່ ສປປ ລາວ ຍົກຂຶ້ນມານັ້ນ ຈະໄດ້ຮັບການແກ້ໄຂເປັນຢ່າງດີ ໂດຍການພິຈາລະນາເຖິງ ຄວາມຕ້ອງການ ແລະ ຄວາມຄາດຫວັງຂອງ ປະເທດສະມາຊິກອື່ນໆ ແລະ ພາກສ່ວນກ່ຽວຂ້ອງຕ່າງໆ.

ທ່ານລັດຖະມົນຕີ ດາວວົງ ຮັບປະກັນຕໍ່ ຫົວໜ້າກອງເລຂາວ່າ ຕົນຈະຊີ້ນຳ ພະນັກງານຂອງຕົນ ແລະ ດຳເນີນວຽກງານກັບ ກະຊວງອື່ນໆ ເຊິ່ງຮວມທັງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກອງເລຂາ ຄມຂ ເພື່ອເລັ່ງລັດ ຂັ້ນຕອນສະຫຼຸບສັງລວມ ແລະ ການຈັດຕັ້ງປະຕິບັດ ເພື່ອຜົນປະໂຫຍດຂອງທຸກພາກສ່ວນ.

ທ່ານໄດ້ເນັ້ນໜັກໃຫ້ເຫັນເຖິງ ຄວາມສຳຄັນຂອງການ ສ້າງຄວາມເຂົ້າໃຈເຊິ່ງກັນແລະກັນ ລະຫວ່າງ ສປປ ລາວ, ປະເທດອື່ນໆ ແລະ ພາກສ່ວນກ່ຽວຂ້ອງກັບແມ່ນ້ຳຂອງ ພ້ອມທັງ ການສ້າງຄວາມສົມດູນລະຫວ່າງ ຄວາມຕ້ອງການ ແລະ ຈຸດເດັ່ນທຽບຖານຂອງ ສປປ ລາວ ກ່ຽວກັບ ການພັດທະນາພະລັງງານໄຟຟ້າທາງນ້ຳ ຢ່າງຍືນຍົງ ແລະ ບັນຫາທີ່ແທ້ຈິງຂອງພາກສ່ວນອື່ນໆ.

ທ່ານລັດຖະມົນຕີ ແລະ ຫົວໜ້າກອງເລຂາ ຄມສ ຍັງໄດ້ສົນທະນາກັນ ກ່ຽວກັບ ຄວາມສຳຄັນຂອງ ການຮັບປະກັນຕໍ່ ບັນດາປະເທດສະມາຊິກອື່ນໆ ກ່ຽວກັບ ຄວາມກັງວົນໃຈຂອງພວກເຂົາ ທີ່ກ່ຽວຂ້ອງກັບ ໂຄງການພະລັງງານໄຟຟ້າຊະນະຄາມ ເຊິ່ງໃນປະຈຸບັນນີ້ ແມ່ນກຳລັງຢູ່ໃນຂະບວນການ ປຶກສາຫາລືລ່ວງໜ້າ ຂອງ ຄມສ ເປັນເວລາ 6 ເດືອນ ເລີ້ມແຕ່ເດືອນພຶດສະພາຂອງ ປີຜ່ານມາ. ແຕ່ຍ້ອນການລະບາດຂອງພະຍາດໂຄວິດ-19, ຂະບວນການປຶກສາຫາລື ທີ່ກວມເອົາໄລຍະເວລາ 6 ເດືອນນັ້ນ ຈຶ່ງຍັງບໍ່ທັນສະຫຼຸບໄດ້ເທື່ອ.

ທ່ານ ດຣ. ຮັດດາ ໄດ້ກ່າວເພີ່ມຕື່ມອີກວ່າ ຕົນ ແລະ ປະເທດສະມາຊິກອື່ນໆ ກຳລັງຄອງຄອຍຕິດຕາມການລາຍງານຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດ ບັນດາແຜນປະຕິບັດງານຮ່ວມ ຂອງ ສປປ ລາວ ສຳລັບ ໂຄງການພະລັງງານໄຟຟ້າປາກແບ່ງ, ໂຄງການພະລັງງານໄຟຟ້າປາກລາຍ ແລະ ໂຄງການພະລັງງານໄຟຟ້າຫຼວງພະບາງ ເຊິ່ງທັງໝົດນັ້ນ ໄດ້ຜ່ານຂະບວນການ ປຶກສາຫາລືລ່ວງໜ້າ ຢ່າງເປັນທາງການ ເປັນເວລາ 6 ເດືອນ ສຳເລັດແລ້ວ.

ແຜນປະຕິບັດງານຮ່ວມເຫລົ່ານີ້ ແມ່ນເປັນກົນໄກ ຫຼັງຈາກການປຶກສາຫາລືລ່ວງໜ້າ ສຳເລັດແລ້ວ ເຊິ່ງກຳນົດພັນທະຂອງ ຄມສ, ພາກສ່ວນກ່ຽວຂ້ອງຕ່າງໆ, ສປປ ລາວ ແລະ ຜູ້ພັດທະນາໂຄງການ ໃນການແລກປ່ຽນຂໍ້ມູນ, ຂ່າວສານ ແລະ ຄຳຄິດເຫັນ ໃນໄລຍະພັດທະນາໂຄງການ ແລະ ໄລຍະດຳເນີນງານຂອງໂຄງການ.

ເດືອນແລ້ວນີ້ ທ່ານລັດຖະມົນຕີວ່າການ ກະຊວງ ຊສ ພະນະທ່ານ ນາງ ບຸນຄຳ ວໍຣະຈິດ ໄດ້ໃຫ້ຄຳໝັ້ນສັນຍາ ເຊັ່ນດຽວກັນນີ້ ຕໍ່ທ່ານຫົວໜ້າກອງເລຂາ ໃນເວລາທີ່ພວກເຂົາປະຊຸມກັນທາງອອນລາຍ. ພະນະທ່ານ ນາງບຸນຄຳ ໄດ້ກ່າວວ່າ: “ພວກເຮົາ ສະໜັບສະໜູນ ຄມສ ຢ່າງເຕັມທີ່ ແລະ ພວກເຮົາມີຄວາມມຸ້ງໝັ້ນ ທີ່ຈະດຳເນີນວຽກງານຮ່ວມກັບ ບັນດາປະເທດສະມາຊິກອື່ນໆ ເພື່ອຄວາມຜາສຸກຂອງ ບັນດາປະເທດແຄມຝັ່ງນ້ຳ ທຸກໆປະເທດ ແລະ ເພື່ອປະຊາຊົນຂອງ ແມ່ນ້ຳຂອງ.”

###